ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ເລກທີ ...0079.../ປສຊ

ນະຄອນຫລວງວຽງຈັນ, ວັນທີ 15 ເມສາ 2024

# ໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາ

ການຈັດຊື້ລົດກະບະ 4x4 WD, Diesel Engine, Double Cab, ຈຳນວນ 2 ຄັນ

ສັນຍາສະບັບເລກທີ: CLEAR/Pick.up/G-S/2024 (CLEAR-G-024)

ເຖິງ: **ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ**

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ແລະ ມີຈຸດປະສົງທີ່ຈະນໍາໃຊ້ທຶນສ່ວນໜຶ່ງ ເຂົ້າໃນການຈັດຊື້ລົດກະບະ 4x4 WD ຈຳນວນ 2 ຄັນ, ດ້ວຍການປະມູນແບບສົມທຽບລາຄາ.
2. ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນຮ້ານ/ບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາ ສໍາລັບການຈັດຊື້ເຄື່ອງທີ່ໄດ້ລະບຸໄວ້ຂ້າງເທິງ, ໄລຍະເວລາໃນການສົ່ງມອບ ແມ່ນ 60 ວັນ.
3. ການປະມູນນີ້ ຈະດໍາເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງສະເໜີລາຄາ ຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 03 ພຶດສະພາ 2024 ທີ່ຫ້ອງການໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ແລະ ຊອງປະມູນສົມທຽບລາຄາທຸກໆຊອງ ຈະໄດ້ເປີດໃນເວລາ 14:00 ໂມງ, ວັນທີ 03 ພຶດສະພາ 2024 ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈຕ້ອງການເຂົ້າຮ່ວມ. ທີ່ຫ້ອງການໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຕັ້ງຢູ່ໃນຫ້ອງການລັດຖະບານ, ຖະໜົນສີສະຫວາດ, ບ້ານນາໄຮ່ດຽວ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ.
5. ທ່ານສາມາດສອບຖາມຂໍ້ມູນເພີ່ມເຕີມ ໄດ້ທີ່ຫ້ອງການໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຕາມວັນ ແລະ ເວລາເຮັດວຽກ ໂທ: 261479-80 (ຕໍ່ 105) ໜ່ວຍງານຈັດຊື້.

ຜູ້ອໍານວຍການ,

ພັດນະຄອນ ຄັນທະມີໄຊ